ບໍລິສັດ AGL ປະກັນໄພລາວ
Assurances General Laos

Ref: TLFM_V2.1_180912

# ເງື່ອນໄຂປະກັນຊີວິດ

## ສາລະບານ


1. ຂໍ້ກຳນົດ ........ 2
2. ສິດ ແລະ ພັນທະຂອງຜູ້ສະໝັກ ........ 2
3. ການຄຸ້ມກັນ ........ 3
4. ຜູ້ໄດ້ຮັບຜົນປະໂຫຍດ ........ 4
5. ການຊໍາລະຄ່າທໍານຽມ ແລະ ການປັບປ່ຽນ ........ 4
6. ການຊໍາລະວົງເງິນປະກັນໄພໂດຍຜູ້ປະກັນໄພ. ........ 5
7. ສິດໃນການກວດສອບ ........ 5
8. ຂໍ້ຍົກເວັ້ນ ........ 5
9. ການສູນຫາຍໄປ ........ 6
10. ເອກະສານການສະແດງຂໍ້ມູນທີ່ບໍ່ຖືກຕ້ອງ ........ 6
11. ຂອບເຂດອໍານາດສານ ........ 6
12. ແຈ້ງການຂໍ້ມູນຄວາມເປັນສ່ວນຕົວ ........ 7
13. ອື່ນໆ ........ 7

# ເງື່ອນໄຂປະກັນ
# ຊີວິດ

ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພເສຍຊີວິດ, ບໍລິສັດຈະຊໍາລະວົງເງິນປະກັນໄພໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດ ດັ່ງທີ່ກໍາ ນົດໄວ້ໃນຕາຕະລາງ

## 1. ຂໍ້ກໍານົດ

**"ການເສຍຊີວິດ"** ໝາຍເຖິງ ການເສຍຊີວິດຈາກສາເຫດທັງໝົດ (ການເຈັບເປັນ ແລະ ອຸບັດຕິເຫດ)

**"ບໍລິສັດ ຫຼື ຜູ້ປະກັນໄພ"** ໝາຍເຖິງ ບໍລິສັດທີ່ອອກເງື່ອນໄຂປະກັນໄພນີ້.

**"ຜູ້ສະເໜີເອົາການປະກັນໄພ"** ໝາຍເຖິງ ຜູ້ສະເໜີເອົາປະກັນໄພໃນຕາຕະລາງ ແລະ ຜູ້ທີ່ລົງລາຍເຊັນໃນສັນຍາ ແລະ ຕາມຫຼັກການແມ່ນຜູ້ທີ່ຊໍາລະຄ່າທໍານຽມ.

**"ຜູ້ໄດ້ຮັບການປະກັນໄພ"** ໝາຍເຖິງ ບຸກຄົນທີ່ຖືວ່າເປັນຜູ້ໄດ້ຮັບການປະກັນໄພໃນຕາຕະລາງ.

**"ອຸບັດຕິເຫດ"** ໝາຍເຖິງ ເຫດການທີ່ເກີດຂຶ້ນຢ່າງກະທັນຫັນໂດຍບໍ່ຄາດຄິດຈາກປັດໃຈພາຍນອກຮ່າງກາຍ ທີ່ເກີດຂຶ້ນ ໂດຍບໍ່ໄດ້ເຈຕະນາ ຫຼື ໂດຍບໍ່ຄາດຄິດກັບຜູ້ໄດ້ຮັບການປະກັນໄພ

**"ເຫດການກໍ່ການຮ້າຍ"** ໝາຍເຖິງ ການກະທໍາໃດໜຶ່ງ, ບໍ່ພຽງແຕ່ເປັນການນໍາໃຊ້ກໍາລັງ ຫຼື ຄວາມຮຸນແຮງ ແລະ/ຫຼື ການຂົ່ມຂູ່ຂອງບຸກຄົນ ຫຼື ກຸ່ມຄົນໃດໜຶ່ງ, ບໍ່ວ່າຈະເປັນການກະທໍາດ້ວຍຕົນເອງ ຫຼື ໃນນາມ ຫຼື ຮ່ວມກັບອົງການຈັດຕັ້ງໃດໜຶ່ງ ຫຼື ລັດຖະບານ, ທີ່ເນັ້ນໃສ່ຈຸດປະສົງທາງດ້ານການເມືອງ, ສາສະໜາ, ອຸດົມການ ຫຼື ຈຸດປະສົງທີ່ຄ້າຍຄືກັນ ລວມທັງ ຈຸດປະສົງທີ່ຈະສົ່ງຜົນກະທົບຕໍ່ລັດຖະບານ ແລະ/ຫຼື ເຮັດໃຫ້ປະຊາຊົນ ຫຼື ພາກສ່ວນໃດໜຶ່ງເກີດຄວາມຢ້ານກົວ
ການກໍ່ການຮ້າຍປະກອບມີ ການກະທໍາໃດໜຶ່ງທີ່ກວດສອບ ຫຼື ຮັບຮູ້ໂດຍລັດຖະບານລາວວ່າ ເປັນເຫດການກໍ່ການຮ້າຍ.

## 2. ສິດ ແລະ ພັນທະຂອງຜູ້ສະໝັກ

2.1) ຜູ້ສະໝັກຈະຕ້ອງ:

- ✓ ມີອາຍຸລະຫວ່າງ 18-64 ປີ
- ✓ ມີໜ້າ ແລະ ອາໄສຢູ່ໃນ ສປປ ລາວ ໃນເວລາຍື່ນຄໍາຮ້ອງ
- ✓ ມີໜັງສືຢັ້ງຢືນດ້ານການແພດຕາມຄວາມຕ້ອງການຂອງບໍລິສັດ
- ✓ ຈັດສົ່ງສໍາເນົາໜັງສືຜ່ານແດນ ຫຼື ບັດປະຈໍາຕົວສະບັບກ໊ອບປີ້
- ✓ ຕື່ມແບບຟອມຄໍາຮ້ອງສະໝັກດ້ວຍຄວາມສັດຊື່

2.2) ຜູ້ສະໝັກທີ່ມີເງື່ອນໄຂດັ່ງລຸ່ມນີ້ແມ່ນບໍ່ມີສິດໄດ້ຮັບເງື່ອນໄຂການປະກັນໄພນີ້

- ✓ ຜູ້ສະໝັກທີ່ມີຄວາມບົກພ່ອງທາງດ້ານຈິດໃຈ ຫຼື ມັນສະໝອງ
- ✓ ຜູ້ສະໝັກທີ່ມີອາການ ຫຼື ຖືກບົ່ງມະຕິວ່າມີເຊື້ອເອຈໄອວີ (HIV) ຫຼື ອາການຮ່ວມທີ່ເຮັດໃຫ້ພູມຄຸ້ມກັນ ບົກພ່ອງ (AIDS),
- ✓ ຜູ້ສະໝັກທີ່ມີອາຊີບທະຫານ, ສັງກັດກອງທັບ, ຕຳຫຼວດ, ອາສາສະໝັກ ແລະ ເຂົ້າຮ່ວມໃນສົງຄາມ ຫຼື ການລົບລ້າງອາຊະຍາກຳ ແມ່ນບໍ່ມີສິດໄດ້ຮັບສັນຍາ ແລະ ເງື່ອນໄຂການປະກັນໄພນີ້. ການຄຸ້ມກັນຈະສິ້ນສຸດລົງໂດຍອັດຕະໂນມັດ ໃນວັນທີ່ຜູ້ໄດ້ຮັບການປະກັນໄພໄດ້ມີການປ່ຽນແປງ ແລະ ມີອາຊີບໃໝ່ທີ່ກ່ຽວຂ້ອງ. ຜູ້ໄດ້ຮັບການປະກັນໄພຈະຕ້ອງແຈ້ງໃຫ້ບໍລິສັດຮັບຊາບທັນທີ ໃນກໍລະນີທີ່ມີການປ່ຽນແປງອາຊີບໄປເປັນ ການປະກອບອາຊີບທີ່ບໍ່ມີສິດຕາມທີ່ລະບຸໄວ້ຂ້າງເທິງ ຖ້າເກີດຂຶ້ນຢູ່ໃນໄລຍະເວລາທີ່ສັນຍາ ແລະ ເງື່ອນໄຂການຄຸ້ມກັນຍັງຜົນບັງຄັບຢູ່ ເພື່ອຍົກເລີກສັນຍາ ແລະ ດຳເນີນການທົດແທນຄ່າທຳນຽມຄືນ ອີງຕາມຈຳ ນວນວັນຍັງເຫຼືອທີ່ບໍ່ໄດ້ນຳໃຊ້ຈາກການສິ້ນສຸດສັນຍາສັນຍາປະກັນໄພ ຖ້າມີ

ໂດຍການລົງນາມໃນສັນຍາ, ຜູ້ສະໝັກເຫັນດີຕົກລົງຕາມເງື່ອນໄຂການປະກັນໄພ ແລະ ການຊຳລະຄ່າທຳນຽມທີ່ ກ່ຽວຂ້ອງ.

## 3. ການຄຸ້ມກັນ

ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພເສຍຊີວິດ, ບໍລິສັດຈະຊຳລະເງິນວົງເງິນປະກັນໄພຕາມທີ່ກຳນົດໄວ້ ໃນສັນຍາໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດ.
ສັນຍາຈະມີຜົນນັບຕັ້ງແຕ່ເວລາທີ່ຊຳລະຄ່າທຳນຽມທີ່ກ່ຽວຂ້ອງ ແລະ ສິ້ນສຸດລົງໃນວັນທີທີ່ກຳນົດໄວ້ໃນຕາຕະລາງ.
ວົງເງິນປະກັນໄພຈະຖືກຊຳລະໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດພຽງເທົ່ານັ້ນ.
ການຄຸ້ມກັນປະກັນໄພຈະມີຜົນໄດ້ກໍ່ຕໍ່ເມື່ອ ຄ່າທຳນຽມໄດ້ຮັບການຊຳລະແລ້ວເທົ່ານັ້ນ, ຖືວ່າບໍ່ມີຜົນບໍ່ວ່າສາເຫດຂອງໃດຂອງການບໍ່ຊຳລະເງິນກໍ່ຕາມ.

ການເສຍຊີວິດຈາກມະເຮັງ ແລະ ເນື້ອງອກ, ພະຍາດຫົວໃຈເສັ້ນເລືອດ; ໄຂ່ຫຼັງຊຸດໂຊມ ທີ່ເກີດຂຶ້ນພາຍໃນໄລຍະເວລາ 3 ເດືອນ ນັບຈາກວັນທີເລີ່ມອອກເງື່ອນໄຂ ແລະ ສັນຍາປະກັນໄພ ຈະບໍ່ໄດ້ຮັບການຄຸ້ມກັນຈາກການປະກັນໄພນີ້ສຳລັບຜູ້ໄດ້ຮັບການປະກັນໄພໃໝ່ທຸກຄົນ.

ແນວໃດກໍ່ຕາມ, ໄຂ່ຫຼັງຊຸດໂຊມທີ່ເກີດຈາກອຸບັດຕິເຫດ ແມ່ນໄດ້ຮັບການຄຸ້ມກັນພາຍໃຕ້ເງື່ອນໄຂ ແລະ ສັນຍາປະກັນໄພປັດຈຸບັນ ໂດຍບໍ່ຕ້ອງລໍຖ້າໄລຍະເວລາ. ຈຳເປັນຈະຕ້ອງມີລາຍງານດ້ານການແພດຈາກທ່ານໝໍ ທີ່ມີຊື່ຢູ່ໃນລາຍການເພື່ອຢັ້ງຢືນຄວາມຖືກຕ້ອງ.
ຜູ້ໄດ້ຮັບການປະກັນໄພທີ່ບໍ່ໄດ້ສືບຕໍ່ສັນຍາ ແລະ ບໍ່ໄດ້ຊຳລະຄ່າທຳນຽມປະກັນໄພຫຼາຍກວ່າ 3 ເດືອນ ຫຼັງຈາກວັນສິ້ນສຸດສັນຍາປະກັນໄພກ່ອນໜ້ານີ້ ໃຫ້ຖືເປັນຜູ້ໄດ້ຮັບການປະກັນໄພໃໝ່ ແລະ ຈຳເປັນຈະຕ້ອງປະກອບເອກະສານທັງໝົດເຊັ່ນ: ໃບຄຳຮ້ອງ, ໃບຢັ້ງຢືນສຸຂະພາບທີ່ຈຳເປັນສຳລັບຜູ້ສະໝັກໃໝ່.

## 4. ຜູ້ໄດ້ຮັບຜົນປະໂຫຍດ

ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພເສຍຊີວິດ, ຈະມີການຊໍາລະວົງເງິນປະກັນໄພເບື້ອງຕົ້ນໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດ ຕາມທີ່ຜູ້ໄດ້ຮັບການປະກັນໄພ ຫຼື ສະມາຊິກໄດ້ແຈ້ງໄວ້ໃນເວລາຍື່ນຄໍາຮ້ອງຂໍປະກັນໄພ.
ກໍລະນີທີ່ບໍ່ໄດ້ "ລະບຸຜູ້ໄດ້ຮັບຜົນປະໂຫຍດ", ຜູ້ທີ່ໄດ້ຮັບຜົນປະໂຫຍດຈະແມ່ນພັນລະຍາ/ສາມີຄົນປັດຈຸບັນທີ່ຖືກຕ້ອງ ຕາມກົດໝາຍ.
ກໍລະນີບໍ່ມີພັນລະຍາ / ສາມີ, ຜູ້ໄດ້ຮັບຜົນປະໂຫຍດຈະແມ່ນລູກ
ກໍລະນີບໍ່ມີລູກ, ຜູ້ໄດ້ຮັບຜົນປະໂຫຍດຈະແມ່ນພໍ່ແມ່ຂອງຜູ້ໄດ້ຮັບການປະກັນໄພ
ກໍລະນີບໍ່ມີພໍ່ແມ່, ຜູ້ໄດ້ຮັບຜົນປະໂຫຍດຈະແມ່ນຜູ້ສືບສະກຸນອີງຕາມກົດໝາຍມູນມໍລະດົກຂອງລາວ

## 5. ການຊໍາລະຄ່າທໍານຽມ ແລະ ການປັບປ່ຽນ

ຈະຕ້ອງຊໍາລະຄ່າທໍານຽມຄົບຈໍານວນໃນຄັ້ງດຽວ ສໍາລັບໄລຍະເວລາການຄຸ້ມກັນທີ່ຕ້ອງການ.

ການສະເໜີລາຄາຈະບໍ່ມີການຄຸ້ມກັນໃດໆ

ບໍ່ມີການຮຽກຮ້ອງທີ່ມີຜົນ ກ່ອນການຊໍາລະຄ່າທໍານຽມ ບໍ່ວ່າດ້ວຍເຫດຜົນ ແລະ ສະຖານະການໃດກໍ່ຕາມ.
ການຄຸ້ມກັນຈະເລີ່ມໃນເວລາທີ່ມີການຊໍາລະຄ່າທໍານຽມ

ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພຕ້ອງການຍົກເລີກສັນຍາ, ໃຫ້ນໍາໃຊ້ຕາຕະລາງດ້ານຂວາມືເພື່ອຄິດໄລ່ການທົດ ແທນຄ່າທໍານຽມຄືນ

| ຈໍານວນວັນທີ່ນໍາໃຊ້ | % ການທົດແທນຄ່າທໍານຽມຄືນຕໍ່ປີ |
|---|---|
| <30 | 85% |
| 31-60 | 75% |
| 61-90 | 65% |
| 91-120 | 55% |
| 121-150 | 45% |
| 151-180 | 35% |
| 181-210 | 25% |
| 211-240 | 20% |
| 241-270 | 15% |
| 271-300 | 10% |
| 301-330 | 5% |
| 331-365 | 0% |

## 6. ການຊໍາລະວົງເງິນປະກັນໄພໂດຍຜູ້ປະກັນໄພ.

ໂດຍການຮຽກຮ້ອງຄ່າສິນທົດແທນ, ຜູ້ໄດ້ຮັບຜົນປະໂຫຍດ ຫຼື ຕົວແທນຂອງບຸກຄົນດັ່ງກ່າວ ແລ້ວແຕ່ກໍລະນີ, ຈະຕ້ອງ ສະໜອງຫຼັກຖານທີ່ຈໍາເປັນທັງໝົດຕາມລາຍຈ່າຍຕົວຈິງໃຫ້ແກ່ບໍລິສັດ.

ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພເສຍຊີວິດ, ຈະຕ້ອງປະກອບເອກະສານດັ່ງຕໍ່ໄປນີ້ ແລະ ຍື່ນໃຫ້ ບປລ ພາຍໃນ 30 ວັນ ຫຼັງຈາກວັນທີ່ເສຍຊີວິດ

1. ສັນຍາປະກັນໄພ
2. ສຳເນົາໃບຢັ້ງຢືນການເສຍຊີວິດອອກໃຫ້ໂດຍອຳນາດການປົກຄອງ
3. ໃບຢັ້ງຢືນສຸຂະພາບຈາກທ່ານໝໍຜູ້ທີ່ຢັ້ງຢືນລັກສະນະຂອງການເສຍຊີວິດ ໃນກໍລະນີທີ່ບໍລິສັດຕັດສິນວ່າມີ ຄວາມຈຳເປັນ
4. ລາຍງານການເສຍຊີວິດ ໃນກໍລະນີທີ່ບໍລິສັດຕັດສິນວ່າມີຄວາມຈຳເປັນ
5. ໜັງສືຜ່ານແດນ ຫຼື ບັດປະຈຳຕົວຂອງຜູ້ໄດ້ຮັບການປະກັນໄພທີ່ເສຍຊີວິດ ແລະ ຜູ້ໄດ້ຮັບຜົນປະໂຫຍດ
6. ເອກະສານເພີ່ມຕື່ມອື່ນໆ ທີ່ບໍລິສັດປະກັນໄພອາດຈະສອບຖາມ

ບປລ ຈະຊຳລະອີງເງິນໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດຕາມກຳນົດພາຍໃນ 30 ວັນ ນັບຈາກວັນທີ່ສົ່ງເອກະສານທີ່ຈຳເປັນ ທັງໝົດມາເປັນຫຼັກຖານ.

## 7. ສິດໃນການກວດສອບ

ໃນກໍລະນີເສຍຊີວິດ, ບໍລິສັດມີສິດທີ່ຈະດຳເນີນການຊັນນະສູດພາຍໃນຂອບເຂດຂອງກົດໝາຍ,

## 8. ຂໍ້ຍົກເວັ້ນ

ການປະກັນໄພນີ້ບໍ່ໄດ້ຄຸ້ມກັນການສູນເສຍທີ່ເກີດຈາກ/ ຫຼື ເປັນຜົນມາຈາກສາເຫດ ຕໍ່ໄປນີ້:

1. ການຂ້າຕົວຕາຍ ຫຼື ພະຍາຍາມຂ້າຕົວຕາຍ ຫຼື ການທຳຮ້າຍຮ່າງກາຍຕົວເອງຂອງຜູ້ໄດ້ຮັບການປະກັນໄພ.
2. ການກໍ່ການຮ້າຍ, ມີການລະເບີດຂອງອາວຸດທີ່ຍັງບໍ່ທັນແຕກ (UXO), ເຮັດວຽກຢູ່ໃນອຸໂມງ, ໃຕ້ດິນ / ໃຕ້ນ້ຳ ແລະ ນຳໃຊ້ວັດຖຸລະເບີດ
3. ການປະກັນໄພຈາກອາຊະຍາກຳ
4. ຂະນະທີ່ຜູ້ໄດ້ຮັບການປະກັນໄພເຂົ້າຮ່ວມການອາລະວາດຕົບຕີ ຫຼື ມີສ່ວນຊຸກຍູ້ໃຫ້ເກີດການອາລະວາດ
5. ຂະນະທີ່ຜູ້ໄດ້ຮັບການປະກັນໄພເຂົ້າຮ່ວມໃນການກະທຳຜິດກົດໝາຍ ຫຼື ອາຊະຍາກຳລວມທັງ ການກໍ່ວິນາດສະ ກຳ ແລະ ການກໍ່ການຮ້າຍ
6. ຂະນະທີ່ຜູ້ໄດ້ຮັບການປະກັນໄພປະຕິບັດໜ້າທີ່ເປັນທະຫານ, ຕຳຫຼວດ ຫຼື ອາສາສະໝັກ ແລະ ເຂົ້າຮ່ວມໃນການລົບລ້າງສົງຄາມ ຫຼື ອາຊະຍາກຳ.
7. ສົງຄາມ (ບໍ່ວ່າຈະໄດ້ມີການປະກາດສົງຄາມ ຫຼື ບໍ່ກໍ່ຕາມ), ການຮຸກຮານ, ການທຳລາຍຂອງສັດຕູຕ່າງຊາດ, ສົງ ຄາມກາງເມືອງ, ການກະບົດ, ການນັດຢຸດງານ.
8. ການແຜ່ລັງສີ ຫຼື ການແຜ່ກຳມັນຕະພາບລັງສີຈາກນິວເຄຼຍ ແລະ ຈາກການແຕກຕົວທາງນິວເຄຼຍ ເຊິ່ງດຳເນີນຕິດຕໍ່ ໄປດ້ວຍຕົນເອງ. ການລະເບີດຂອງກຳມັນຕະພາບລັງສີ ຫຼື ສ່ວນປະກອບຂອງນິວເຄຼຍ ຫຼື ວັດຖຸອັນຕະລາຍໃດໜຶ່ງ ທີ່ອາດຈະເກີດການລະເບີດໃນຂະບວນການນິວເຄຼຍໄດ້.
9. ການຮຽກຮ້ອງເປັນຜົນມາໂດຍກົງ ຫຼື ທາງອ້ອມຈາກ ອາການຮ່ວມທີ່ເຮັດໃຫ້ພູມຄຸ້ມກັນບົກພ່ອງ (AIDS)
10. ການມຶນເມົາ ຫຼື ສິ່ງເສບຕິດ

11. ຂະນະທີ່ຜູ້ໄດ້ຮັບການປະກັນໄພກຳລັງຂຶ້ນ ຫຼື ລົງ ຫຼື ໂດຍສານຢູ່ໃນອາກາດສະຍານທີ່ບໍ່ໄດ້ຈົດທະບຽນເພື່ອບັນທຸກ ຜູ້ໂດຍສານ ແລະ ບໍ່ໄດ້ດຳເນີນການໂດຍສາຍການບິນຂອງລັດ.
12. ການເຂົ້າຮ່ວມໃນກິລາລະດັບມືອາຊີບ, ການແຂ່ງຂັນຊີງຊະນະເລີດ ແລະ ການແຂ່ງຂັນກິລາ
13. ການສູນເສຍທີ່ເກີດຂຶ້ນຢູ່ນອກ ສປປ ລາວ ເຊິ່ງເປັນເວລາຫຼາຍກວ່າ ໙໐ ວັນຕິດຕໍ່ກັນໃນເງື່ອນໄຂການປະກັນໄພໜຶ່ງປີ.
14. ມາດຕະການດ້ານເສດຖະກິດທີ່ຫ້າມບໍ່ໃຫ້ຜູ້ປະກັນໄພ ຫຼື ສະມາຊິກຂອງກຸ່ມ ອາລີອັນສ໌ ສະໜອງການຄຸ້ມກັນພາຍເງື່ອນໄຂການປະກັນໄພນີ້

## ໙. ການສູນຫາຍໄປ

ໃນກໍລະນີທີ່ "ຜູ້ໄດ້ຮັບການປະກັນໄພສູນຫາຍໄປ", ຜູ້ປະກັນໄພຈະຊຳລະຈຳນວນເງິນທີ່ໄດ້ຮັບການຄຸ້ມກັນ ໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດ ຖ້າວ່າສັນຍາ ແລະ ເງື່ອນໄຂປະກັນໄພດັ່ງກ່າວມີຜົນບັງຄັບໃຊ້ ໃນວັນທີ່ຜູ້ໄດ້ຮັບການປະກັນໄພອາດຖືວ່າເສຍຊີວິດ, ເຊິ່ງຖືກຕັດສິນເປັນທາງການຈາກສານ.

## 10. ເອກະສານການສະແດງຂໍ້ມູນທີ່ບໍ່ຖືກຕ້ອງ

ຜູ້ໄດ້ຮັບການປະກັນໄພມີຄວາມຮັບຜິດຊອບເປີດເຜີຍຂໍ້ມູນທີ່ຮູ້ຈັກ ແລະ ຂໍ້ເທັດຈິງທັງໝົດ ທີ່ອາດຈະເຮັດໃຫ້ເກີດຄວາມສ່ຽງເພີ່ມຂຶ້ນ ຕາມທີ່ລະບຸໄວ້ໃນເງື່ອນໄຂການປະກັນໄພ ເພື່ອຊ່ວຍໃຫ້ມີການປະເມີນຄວາມສ່ຽງໄດ້ຢ່າງຖືກຕ້ອງ ຜູ້ປະກັນ ໄພຈະຮັບຜິດຊອບໃນເວລາດຳເນີນສັນຍາປະກັນໄພ.

ບໍລິສັດມີສິດໃນການຍົກເລີກເງື່ອນໄຂ, ສັນຍາ ແລະ ການຄຸ້ມກັນການປະກັນໄພໃນກໍລະນີມີການຄິດໂກງ, ເອກະສານການສະແດງຂໍ້ມູນທີ່ບໍ່ ຖືກຕ້ອງ ຫຼື ເງື່ອນໄຂທາງການແພດບໍ່ຊັດເຈນໃນເວລາຍື່ນຄຳຮ້ອງ ຫຼື ຂະບວນການຮຽກຮ້ອງ.

## 11. ຂອບເຂດອຳນາດສານ

ເງື່ອນໄຂການປະກັນໄພ ນີ້ຢູ່ພາຍໃຕ້ກົດໝາຍ ແລະ ລະບຽບການຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## 12. ແຈ້ງການຂໍ້ມູນຄວາມເປັນສ່ວນຕົວ

ບໍລິສັດດຳເນີນການ ແລະ ປະມວນຂໍ້ມູນສ່ວນບຸກຄົນ ເພື່ອຈຸດປະສົງໃນການກະກຽມໃບສະເໜີລາຄາ, ອອກສັນຍາປະກັນໄພ, ເກັບຄ່າທຳນຽມ, ຊຳລະການຮຽກຮ້ອງ ແລະ ສຳລັບຈຸດປະສົງອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການຈັດຕັ້ງເງື່ອນໄຂການປະກັນໄພຕາມສັນຍາປະກັນໄພ. ຂໍ້ມູນຂອງຜູ້ໄດ້ຮັບການປະກັນໄພຖືເປັນຄວາມລັບສຸດຍອດຂອງບໍລິສັດ. ຜູ້ໄດ້ຮັບການປະກັນໄພມີສິດທີ່ຈະເຂົ້າ ເຖິງຂໍ້ມູນສ່ວນບຸກຄົນທີ່ກ່ຽວກັບພວກເຂົາ. ຜູ້ໄດ້ຮັບການປະກັນໄພຍັງມີສິດທີ່ຈະຮ້ອງຂໍໃຫ້ບໍລິສັດແກ້ໄຂ ຫຼື ລົບຂໍ້ມູນໃດໜຶ່ງທີ່ ຜູ້ໄດ້ຮັບການປະກັນໄພເຊື່ອວ່າບໍ່

ຖືກຕ້ອງ ຫຼື ເກົ່າແລ້ວ. ບໍລິສັດຈະບໍ່ຮັກສາຂໍ້ມູນຂອງຜູ້ໄດ້ຮັບການປະກັນໄພໄວ້ດົນເກີນຄວາມຈຳເປັນ ນອກເໜືອຈາກຈຸດປະສົງທີ່ມີ.

ພວກເຮົາອາດຈະເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານ ໃຫ້ກັບພາກສ່ວນອື່ນທີ່ການດຳເນີນທຸລະກິດຮ່ວມກັບພວກເຮົາ ຕາມຈຸດປະສົງທີ່ລະບຸໄວ້ໃນວັກເທິງນີ້ ຫຼື ເພື່ອໃຫ້ພວກເຂົາສາມາດມອບຜະລິດຕະພັນ ແລະ ການບໍລິການຂອງພວກເຂົາ ໃຫ້ແກ່ທ່ານ. ພາກສ່ວນເຫຼົ່ານີ້ອາດປະກອບມີ ຜູ້ປະກັນໄພ, ຜູ້ສື່ກາງ, ຜູ້ປະກັນໄພຕໍ່, ສະມາຄົມປະກັນໄພ, ບໍລິສັດທີ່ກ່ຽວຂ້ອງ, ທີ່ປຶກສາຂອງພວກເຮົາ, ບຸກຄົນທີ່ມີສ່ວນກ່ຽວຂ້ອງໃນການຮຽກຮ້ອງ, ຜູ້ເກັບກຳຂໍ້ມູນການຮຽກຮ້ອງພາຍ ນອກ ແລະ ຜູ້ກວດສອບ, ພາກສ່ວນຕ່າງໆທີ່ພວກເຮົາມີແຜນປະກັນໃນບ່ອນທີ່ທ່ານໄດ້ຊື້ປະກັນໄພ (ເຊັ່ນ: ຜູ້ໃຫ້ຢືມເງິນ ຫຼື ຜູ້ຜະລິດລົດຍົນ ແລະ/ຫຼື ຕົວແທນຈຳໜ່າຍ). ຍັງອາດຈະມີການເປີດເຜີຍຂໍ້ມູນຕໍ່ລັດຖະບານ, ການບັງຄັບໃຊ້ກົດໝາຍ, ການແກ້ໄຂຂໍ້ຂັດແຍ່ງ, ອົງການດ້ານກົດໝາຍ ຫຼື ອົງການປົກຄອງ ຫຼື ຕາມກົດໝາຍກຳນົດ

ພວກເຮົາອາດຈະບັນທຶກສາຍໂທເຂົ້າ ແລະ/ຫຼື ໂທອອກ ເພື່ອຈຸດປະສົງໃນການຝຶກອົບຮົມ ຫຼື ການກວດສອບ. ໃນກໍລະນີ ທີ່ພວກເຮົາໄດ້ບັນທຶກການໂທ, ພວກເຮົາສາມາດສະໜອງສຳເນົາໃຫ້ທ່ານຕາມຄຳຮ້ອງຂໍຂອງທ່ານໄດ້ເມື່ອເໝາະສົມ.

ໂດຍການສະໜອງຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ແກ່ພວກເຮົາ, ທ່ານ ແລະ ບຸກຄົນອື່ນທີ່ທ່ານສະໜອງຂໍ້ມູນສ່ວນຕົວ ດ້ວຍຄວາມສະໝັກໃຈໃຫ້ນຳໃຊ້ ແລະ ເປີດເຜີຍຂໍ້ມູນເຫຼົ່ານີ້ ຈົນກວ່າທ່ານຈະກ່າວໄວ້ເປັນຢ່າງອື່ນ. ຖ້າທ່ານຕ້ອງການຍົກເລີກຄວາມສະໝັກໃຈຂອງທ່ານ, ລວມທັງສິ່ງຕ່າງໆເຊັ່ນຂໍ້ມູນທີ່ໄດ້ຮັບກ່ຽວກັບຜະລິດຕະພັນ ແລະສິ່ງທີ່ພວກເຮົາ ຫຼື ບຸກຄົນທີ່ມີການພົວພັນກັບພວກເຮົາມອບໃຫ້, ກະລຸນາຕິດຕໍ່ຫາພວກເຮົາ.

## 13. ອື່ນໆ

ລາຍລະອຽດຂອງການຄຸ້ມກັນທີ່ເປັນທາງເລືອກອື່ນໆທີ່ຮ້ອງຂໍ ແລະ ເຫັນດີຕົກລົງໂດຍ ຜູ້ສະໝັກທີ່ບໍ່ໄດ້ລະບຸໄວ້ໃນນະ ໂຍບາຍແມ່ບົດໃນປັດຈຸບັນ ຈະຖືກຄັດຕິດເປັນເງື່ອນໄຂເພີ່ມເຕີມສຳລັບການຈັດຕັ້ງປະຕິບັດ. ຜູ້ສະໝັກຕ້ອງອ່ານຢ່າງລະ ອຽດ ແລະ ໃຫ້ເຂົ້າໃຈກ່ອນລົງນາມ ແລະ ຈ່າຍຄ່າທຳນຽມ

## DIGITAL COMMUNICATION CONSENT

By agreeing to purchase this insurance, you agree to receive via SMS and/or via e-mail by the mobile number and/or e-mail address provided herein above respectively on contract renewal notice, premium and/or claim payment status and any information of your interest on this insurance. Please visit https://www.agl-allianz.com to view Allianz Genera Laos Data Privacy Notice.

## ການອະນຸຍາດໃຫ້ສື່ສານຜ່ານຊ່ອງທາງດີຈີຕອນ

ໂດຍການຕົກລົງຊື້ປະກັນໄພນີ້, ທ່ານຕົກລົງທີ່ຈະຮັບຂໍ້ມູນກ່ຽວກັບການແຈ້ງຕໍ່ສັນຍາ, ການແຈ້ງສະຖານະການຊຳລະຄ່າທຳນຽມປະກັນໄພ ແລະ/ຫຼື ການຈ່າຍສິນທົດແທນປະກັນໄພ ແລະ ຂໍ້ມູນອື່ນໆທີ່ເປັນປະໂຫຍດສຳລັບທ່ານກ່ຽວກັບປະກັນໄພນີ້ ຜ່ານທາງຂໍ້ຄວາມສັ້ນ (SMS) ຫາເບີມືຖື ແລະ/ຫຼື ອີເມວ ຕາມທີ່ທ່ານສະໜອງໃຫ້ໃນໃບສະເໜີເອົາປະກັນໄພນີ້. ທ່ານສາມາດເຂົ້າເບິ່ງລາຍລະອຽດແຈ້ງການກ່ຽວກັບຂໍ້ມູນຄວາມເປັນສ່ວນຕົວໄດ້ທີ່ https://www.agl-allianz.com

## MARKETING CONSENT

By purchasing this insurance, you give consent to Allianz General Laos to use your personal information for the marketing purpose of the company e.g. communication on product/service, promotional activities, carrying out lucky draws, marketing surveys, and other information which you may be interested in. In the event you would like to withdraw your marketing consent, please send SMS content "123" to +856 20 56689805 or opt-out via My Insurance Web and My Insurance App.

## ການອະນຸຍາດໃຫ້ສື່ສານຂໍ້ມູນການຕະຫຼາດ

ໂດຍການຕົກລົງຊື້ປະກັນໄພນີ້, ທ່ານອະນຸຍາດໃຫ້ ບໍລິສັດ ອາລີອັນສ໌ ປະກັນໄພລາວ, ນຳໃຊ້ຂໍ້ມູນສ່ວນຕົວຂອງທ່ານເພື່ອຈຸດປະສົງໃນການຕິດຕໍ່ ແລະ ສົ່ງຂໍ້ມູນທາງການຕະຫຼາດຂອງບໍລິສັດເຊັ່ນ: ການບໍລິການ ແລະ ຜະລິດຕະພັນປະກັນໄພ, ກິດຈະກຳສົ່ງເສີມການຂາຍ, ການຈັບສະຫຼາກຊິງໂຊກ, ການສຳຫຼວດຕະຫຼາດ, ແລະ ຂໍ້ມູນອື່ນໆທີ່ທ່ານອາດມີຄວາມສົນໃຈ. ຖ້າທ່ານບໍ່ອະນຸຍາດໃຫ້ໃຊ້ຂໍ້ມູນສ່ວນຕົວເພື່ອຈຸດປະສົງດັ່ງກ່າວ ທ່ານສາມາດແຈ້ງປະຕິເສດຮັບຂໍ້ມູນ ໂດຍການສົ່ງຂໍ້ຄວາມສັ້ນ (SMS) ພິມຄຳວ່າ "123" ສົ່ງໄປທີ່ເບີ +856 20 56689805 ຫຼື ແຈ້ງຜ່ານທາງ My Insurance Web ແລະ My Insurance App.